


# Commemoration of the 60th Anniversary of the Universal Declaration of Human Rights

Opening Remarks by Mme. Sonam Yangchen Rana
UN Resident Coordinator / UNDP Resident Representative
9 December 2008, 08:30am, National Cultural Hall, Vientiane, Lao PDR

*His Excellency Dr Thongloun Sisoulith, Deputy Prime Minister and Minister of Foreign Affairs,*
*Mr Sombath Yialiheu, Vientiane Capital Mayor*
*Distinguished Members of the Presidium ,*
*Ladies and Gentlemen,*

It is my great pleasure to co-chair this significant commemoration event to mark the 60th Anniversary of the Universal Declaration of Human Rights. In 1998 The Lao PDR joined other nations in the international community to commemorate the 50th Anniversary. That was of course 10 years ago. There have been so many changes since then. The Lao PDR has undergone significant economic and social development and emerged as a vibrant community dedicated to building the prosperity for its people. But what has not changed is the commitment of the Lao PDR to its acceptance of the value and significance of the Universal Declaration on Human Rights.

I am aware that the Lao PDR's commemoration of the 60th Anniversary of the Declaration involves a comprehensive range of activities including a symposium, an Art Exhibition and several cultural and social activities, and a concert aimed at the youth and the community in general, to help raise social awareness. The UNDP is very pleased to be associated with the Government of the Lao PDR in commemorating the 60th Anniversary. I take this opportunity to congratulate the Government for its efforts.

*His Excellencies, Ladies and Gentlemen*
The theme for the commemoration of the 60th Anniversary is *Dignity and Justice for all of Us.* This is significant because as you know, the Universal Declaration was adopted 60 years ago. But it embodies values and ideals of justice and human dignity which are timeless. These values are as relevant today as they were when the Universal Declaration was adopted in 1948.

The Universal Declaration enshrines fundamental values such as the right to life, the right to health care, the right to shelter and the basic social rights to family. It also enshrines the right to fair trial and the respect for due process. As the name of the Declaration suggests, these rights are universal in character. They embody values that speak to the humanity in all of us without regard to race, culture or indeed political ideology. They are also consistent with United Nations Millennium Development Goals and important foundations for social justice in the process of economic development.

*His Excellencies, Ladies and Gentlemen*
Let me take the opportunity at today's commemoration to draw attention to two important elements about the Universal Declaration. The first element is that the Declaration was the first major Human Rights instrument to be adopted by the United Nations. The second element is that it is very comprehensive. As the first and the most comprehensive instrument, the Universal Declaration provides an important foundation for other human rights instruments in the international community. I am therefore very pleased to see that the agenda for today's symposium that will follow this celebration ceremony includes comments and discussions on several human rights treaties that the Lao PDR has ratified or signed.

Today's commemoration provides the country with an opportunity to take stock of the implementation of human rights and to evaluate its record. The commemoration is therefore both a time for celebration and a chance for introspection.

The Lao PDR has made important and steady progress in its ratification of several important human rights instruments. Indeed, I am also aware that as recently as September, the Lao PDR signed the United Nations Convention for the Protection of All Persons from Enforced Disappearance. The Lao PDR is one of only for nations in Asia to sign the Convention. This is an important development. On the occasion of the commemoration of the 60th Anniversary of the Universal Declaration, I take the opportunity to congratulate the Government of the Lao PDR for taking the lead in Asia in signing the Convention.

In the same context, I would also like to note that today's commemoration helps to lay firm foundations for the Lao PDR to consider the ratification of the International

Covenant on Civil and Political Rights and other human rights treaties it has signed but not ratified.

Like the Universal Declaration, the Covenant on Civil and Political Rights is almost universal in its acceptance today. 160 countries around the globe have united in partnership in accepting the Covenant. These countries include some of Lao PDR's immediate neighbours such as Vietnam, Cambodia, Indonesia and Thailand. The experience and lessons leaned from such neighbours provide an optimistic basis for the Lao PDR to consider ratification of the Covenant and to join the international community of 160 countries that have ratified the Covenant. Today's commemoration as part of the global community helps to emphasise the need to join the rest of the international community in ratifying the Covenant on Civil and Political Rights.

The UNDP is aware of the many constraints on the Lao PDR in terms of its capacity and resources generally to meet some of the reporting obligations under human rights treaties. In this regard I am pleased to say that as a committed partner of the Lao PDR in its efforts to enhance the country's participation in the international legal process, the UNDP stands ready and willing to assist the Lao PDR to ratify international instruments particularly in the field of human rights.

As you may be aware, since 2002 The UNDP has assisted the Lao PDR to implement the *International Law Project* through the Ministry of Foreign Affairs. The UNDP in partnership with Finland and the European Union will contribute to the International Law Project to enhance the capacity of the Lao PDR in its engagement in international law. Indeed, I am very pleased to announce that the third Phase of the *International Law Project* scheduled to start in 2009 will include significant contribution of resources for developing the national capacity of the Lao PDR for reporting compliance and related obligations under human rights treaties.

*Finally His Excellencies, Ladies and Gentlemen*

On this very important commemoration day, let us all together celebrate the achievements of the Lao PDR in pursing its human rights commitments consistent with the Universal Declaration. But as we do so, let us also build on the country's successes and learn from our challenges. If we do that we can ensure that when we meet again to commemorate the next decade of the Universal Declaration of Human Rights, we will have yet more to celebrate in bringing Dignity and Justice to all of us.

Thank you

End

## ພິທີລະນຶກວັນຄົບຮອບ 60 ປີ ຂອງຖະແຫລງການສາກົນວ່າດ້ວຍສິດທິມະນຸດ

**ຄຳເຫັນຂອງທ່ານ ນ. ໂຊນາມ ຢັງເຊັນ ຣານາ, ຜູ້ປະສານງານອົງການຈັດຕັ້ງເຄືອຂ່າຍສະຫະປະຊາຊາດປະຈຳລາວ / ຜູ້ຕາງໜ້າອົງການສະຫະປະຊາຊາດເພື່ອການພັດທະນາປະຈຳລາວ**

**ວັນທີ 9 ທັນວາ, ທີ່ ຫໍວັດທະນະທຳແຫ່ງຊາດ**

*ພະນະທ່ານ ດຣ ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ,*

*ບັນດາທ່ານ ແຂກຜູ້ມີກຽດ,*

*ທ່ານ ຍິງ ແລະ ທ່ານຊາຍ,*

ຂ້າພະເຈົ້າມີຄວາມປິຕິຊົມຊື່ນທີ່ສຸດ ທີ່ໄດ້ມາຮ່ວມໃນພິທີລະນຶກວັນຄົບຮອບ 60 ປີ ຂອງຖະແຫລງການສາກົນວ່າດ້ວຍສິດທິມະນຸດໃນຄັ້ງນີ້. ໃນປີ 1998, ສປປລາວ ໄດ້ຮ່ວມກັບບັນດາປະຊາຊາດໃນໂລກຈັດຕັ້ງພິທີລະນຶກວັນຄົບຮອບ 50 ປີ ຂອງຖະແຫລງການສາກົນວ່າດ້ວຍສິດທິມະນຸດ. ນັ້ນແມ່ນ 10 ປີຜ່ານມາແລ້ວເຊິ່ງມາຮອດປະຈຸບັນໄດ້ມີການປ່ຽນແປງຫລາຍໆຢ່າງ, ສປປລາວ ໄດ້ຜ່ານຂະບວນການພັດທະນາເສດຖະກິດ-ສັງຄົມ ທີ່ສຳຄັນອັນໄດ້ຮັບຜົນສຳເລັດຢ່າງໃຫຍ່ຫລວງ ແລະ ໄດ້ກາຍເປັນສັງຄົມທີ່ມີການເຄື່ອນໄຫວຢ່າງຫ້າວຫັນທີ່ອຸທິດໃຫ້ແກ່ການສ້າງສາພັດທະນາເພື່ອນຳຄວາມຈະເລີນຜາສຸກມາສູ່ປະຊາຊົນລາວ. ແຕ່ວ່າສິ່ງໜຶ່ງທີ່ບໍ່ໄດ້ປ່ຽນແປງນັ້ນກໍຄືຄຳໝັ້ນສັນຍາຂອງສປປລາວ ໃນການຮັບຮອງຄຸນຄ່າ ແລະ ຄວາມສຳຄັນຂອງຖະແຫລງການສາກົນສະບັບນີ້.

ຂ້າພະເຈົ້າຮູ້ວ່າການຈັດຕັ້ງລະນຶກລະນຶກວັນຄົບຮອບ 60ປີ ຂອງຖະແຫລງການສາກົນວ່າດ້ວຍສິດທິມະນຸດໃນປີນີ້ແມ່ນປະກອບດ້ວຍຫລາຍໆກິດຈະກຳດ້ວຍກັນ ລວມທັງການຈັດສຳມະນາວິຊາການ, ການວາງສະແດງຮູບແຕ້ມ, ການສະແດງສິນລະປະວັນນະຄະດີ ແລະ ງານຄອນເສີດທີ່ແນໃສ່ປູກຈິດສຳນຶກໃຫ້ແກ່ຊາວໜຸ່ມ ແລະ ມວນຊົນທົ່ວໄປໃຫ້ເພີ່ມຄວາມຄວາມຮັບຮູ້ ກ່ຽວກັບ ສິດທິມະນຸດໃຫ້ຫລາຍຂຶ້ນ. ອົງການສະຫະປະຊາຊາດເພື່ອການພັດທະນາມີຄວາມປິຕິຍິນດີທີ່ສຸດທີ່ໄດ້ມີສ່ວນຮ່ວມໃນການຈັດຕັ້ງພິທີລະນຶກວັນຄົບຮອບ 60ປີ ດັ່ງກ່າວນີ້ຮ່ວມກັບ ລັດຖະບານແຫ່ງ ສປປລາວ. ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍຕໍ່ຄວາມພະຍາຍາມ ດັ່ງກ່າວນີ້ຂອງລັດຖະບານແຫ່ງສປປລາວ ມານະໂອກາດນີ້ດ້ວຍ.

*ບັນດາທ່ານຄະນະປະທານ, ບັນດາທ່ານແຂກຜູ້ມີກຽດ, ທ່ານ ຍິງ ແລະ ທ່ານຊາຍ,*

ຄຳຂວັນ ຂອງວັນຄົບຮອບ 60 ປີ ຂອງຖະແຫລງການສາກົນວ່າດ້ວຍສິດທິມະນຸດນີ້ແມ່ນ *ເພື່ອກຽດສັກສີ ແລະ ຄວາມຍຸຕິທຳສຳລັບພວກເຮົາທຸກຄົນ.* ນີ້ແມ່ນມີຄວາມຫມາຍສຳຄັນຫລາຍ ເພາະວ່າ ດັ່ງທີ່ ບັນດາທ່ານໄດ້ຮັບຮູ້ແລ້ວ, ຖະແຫລງການສາກົນວ່າດ້ວຍສິດທິມະນຸດຖືກຮັບຮອງເອົາກ່ອນຫນ້ານີ້ 60 ປີ. ແຕ່ວ່າຖະແຫລງການດັ່ງກ່າວໄດ້ບັນຈຸເອົາຄຸນຄ່າ ແລະ ອຸດົມການແຫ່ງຄວາມຍຸຕິທຳ ແລະ ກຽດສັກສີຂອງມະນຸດໂດຍບໍ່ຂຶ້ນກັບການເວລາ. ຄຸ່ນຄ່າເຫລົ່ານີ້ແມ່ນຍັງຖືກຕ້ອງເຫມາະສົມກັບຍຸກປະຈຸບັນຄືກັນກັບເມື່ອກ່ອນໃນເວລາທີ່ຮັບຮອງເອົາ ຖະແຫລງການສາກົນວ່າດ້ວຍສິດທິມະນຸດໃນປີ 1948.

ຖະແຫລງການສາກົນວ່າດ້ວຍສິດທິມະນຸດກຳນົດຄຸນຄ່າອັນເປັນພື້ນຖານເຊັ່ນ ສິດໃນການມີຊີວິດ, ສິດໃນການໄດ້ຮັບການເບິ່ງແຍງສຸຂະພາບ, ສິດໃນການໄດ້ຮັບທີ່ຢູ່ອາໄສ ແລະ ສິດທາງດ້ານສັງຄົມສຳລັບຄອບຄົວເປັນຕົ້ນ. ຖະແຫລງການຍັງໄດ້ກຳນົດສິດໄດ້ຮັບການດຳເນີນຄະດີ ທີ່ເປັນທຳ ແລະ ການຮັບປະກັນການປະຕິບັດຕາມຂັ້ນຕອນຂອງກົດຫມາຍຢ່າງຖືກຕ້ອງ. ດັ່ງທີ່ຊື່ຂອງຖະແຫລງການໄດ້ບົ່ງບອກສິດທິເຫລົ່ານີ້ມີລັກສະນະທົ່ວໄປ. ສິດທິເຫລົ່ານີ້ບັນຈຸຄຸນຄ່າ ຂອງ ຄວາມເປັນມະນຸດຂອງພວກເຮົາທຸກຄົນໂດຍບໍ່ຈຳແນກວ່າຈະເປັນເຊື້ອຊາດໃດ, ວັດທະນະທຳໃດ ຫລື ອຸດົມການທາງດ້ານການເມືອງໃດກໍຕາມ. ສິດທິເຫລົ່ານີ້ຍັງມີຄວາມສອດຄ່ອງກັບເປົ້າຫມາຍສະຫັດສະວັດດ້ານການພັດທະນາ ແລະ ເປັນພື້ນຖານທີ່ສຳຄັນໃຫ້ແກ່ຄວາມຍຸຕິທຳໃນສັງຄົມໃນຂະບວນການພັດທະນາເສດຖະກິດ.

*ບັນດາທ່ານທີ່ນັບຖື,*

ຂ້າພະເຈົ້າຂໍຖືເອົາໂອກາດການລະນຶກວັນຄົບຮອບ 60 ປີ ຂອງຖະແຫລງການສາກົນວ່າດ້ວຍສິດທິມະນຸດນີ້ເພື່ອສະເຫນີໃຫ້ບັນດາທ່ານຮູ້ຈັກກັບສອງອົງປະກອບທີ່ສຳຄັນຂອງຖະແຫລງການສາກົນດັ່ງກ່າວ. ອັນທີຫນຶ່ງ, ຖະແຫລງການສາກົນວ່າດ້ວຍສິດທິມະນຸດແມ່ນ ເອກະສານສາກົນຫລັກສະບັບທຳອິດທີ່ອົງການສະຫະປະຊາຊາດໄດ້ຮັບຮອງເອົາ. ອັນທີສອງ, ຖະແຫລງການສາກົນວ່າດ້ວຍສິດທິມະນຸດມີເນື້ອໃນທີ່ມີລັກສະນະກວມລວມ. ໃນຖານະເປັນເອກະສານສາກົນສະບັບທຳອິດ ແລະ ມີລັກສະນະກວມລວມ, ຖະແຫລງການສາກົນວ່າດ້ວຍສິດທິມະນຸດໄດ້ເປັນພື້ນຖານໃຫ້ແກ່ການສ້າງ ແລະ ຮັບຮອງເອົາສົນທິສັນຍາສາກົນດ້ານສິດທິມະນຸດໃນໂລກ. ເພາະສະນັ້ນ, ຂ້າພະເຈົ້າມີຄວາມຍິນດີທີ່ສຸດທີ່ໄດ້ເຫັນວ່າຫົວຂໍ້ ສຳມະນາວິຊາການເຊິ່ງຈະຈັດຂຶ້ນພາຍຫລັງພິທີລະນຶກວັນຄົບຮອບ 60ປີ ຂອງຖະແຫລງການສາກົນວ່າດ້ວຍສິດທິມະນຸດໃນຄັ້ງນີ້ ແມ່ນລວມເອົາຄຳຄິດ

ຄຳເຫັນແລະການສົນທະນາກ່ຽວກັບສົນທິສັນຍາສາກົນດ້ານສິດທິມະນຸດທີ່ ສປປລາວ ໄດ້ໃຫ້ສັດຕະຍາບັນ ຫລື ລົງນາມ.

ພິທີລະນຶກວັນຄົບຮອບ 60 ປີ ຂອງຖະແຫລງການສາກົນວ່າດ້ວຍສິດທິມະນຸດໃນມື້ນີ້ເປັນໂອກາດສຳລັບ ສປປລາວ ໃນການຕີລາຄາກ່ຽວກັບການປະຕິບັດສິດທິມະນຸດໃນ ສປປລາວ. ສະນັ້ນ, ໂອກາດວັນຮອບ 60ປີຂອງຖະແຫລງການສາກົນວ່າດ້ວຍສິດທິມະນຸດນີ້ຈຶ່ງເປັນທັງ ການສະເຫລີມສະຫລອງ ແລະ ເປັນທັງການທົບທວນການຈັດຕັ້ງປະຕິບັດ.

ສປປລາວ ໄດ້ມີຄວາມຄືບຫນ້າຢ່າງຫລວງຫລາຍ ແລະ ຢ່າງສະຫມ່ຳສະເຫມີໃນການໃຫ້ສັດຕະຍາບັນແກ່ບັນດາສົນທິສັນຍາສາກົນດ້ານສິດທິມະນຸດທີ່ສຳຄັນ. ຂ້າພະເຈົ້າໄດ້ຊາບວ່າ ໃນມໍ່ໆມານີ້ ຄືເມື່ອເດືອນກັນຍາທີ່ຜ່ານມາ ສປປລາວ ໄດ້ລົງນາມໃນສົນທິສັນຍາຂອງອົງການສະຫະປະຊາຊາດວ່າດ້ວຍການປົກ ປ້ອງທຸກຄົນຈາກການຫາຍສາບສູນແບບບັງຄັບ, ເຮັດໃຫ້ ສປປລາວ ເປັນຫນຶ່ງໃນຈຳນວນມີແຕ່ 4 ປະເທດເທົ່ານັ້ນໃນອາຊີທີ່ໄດ້ລົງນາມສົນທິສັນຍາດັ່ງກ່າວ. ນີ້ຫມາຍເຖິງຄວາມຄືບຫນ້າອັນໃຫຍ່ຫລວງ. ໃນໂອກາດວັນຄົບຮອບ 60ປີ ຂອງຖະແຫລງການສາກົນວ່າດ້ວຍສິດທິມະນຸດ, ຂ້າພະເຈົ້າຂໍຖືໂອກາດນີ້ສະແດງຄວາມຊົມເຊີຍລັດຖະບານແຫ່ງ ສປປ ລາວ ທີ່ໄດ້ຢູ່ໃນແຖວຫນ້າຂອງບັນດາປະເທດໃນອາຊີໃນການລົງນາມໃນສົນ ທິສັນຍາສະບັບນີ້.

ໃນລັກສະນະດຽວກັນ, ຂ້າພະເຈົ້າຂໍມີຄຳເຫັນວ່າ ການລະນຶກວັນຄົບຮອບ 60 ປີ ຂອງຖະແຫລງການສາກົນວ່າດ້ວຍສິດທິມະນຸດ ໃນຄັ້ງນີ້ຊ່ວຍສ້າງພື້ນຖານຢ່າງຫນັກແຫນ້ນສຳລັບ ສປປລາວ ໃນການພິຈາລະນາການໃຫ້ສັດຕະຍາບັນສົນທິສັນຍາສາກົນວ່າດ້ວຍສິດທິທາງດ້ານການເມືອງ ແລະ ສິດທິພົນລະເມືອງ ແລະ ສົນທິສັນຍາສາກົນດ້ານສິດທິມະນຸດອື່ນ ທີ່ລັດຖະບານ ສປປລາວ ໄດ້ລົງນາມແລ້ວແຕ່ຍັງບໍ່ທັນໄດ້ໃຫ້ສັດຕະຍາບັນ.

ເຊັ່ນດຽວກັບຖະແຫລງການສາກົນວ່າດ້ວຍສິດທິມະນຸດ, ສົນທິສັນຍາສາກົນວ່າດ້ວຍສິດທິທາງດ້ານການເມືອງ ແລະ ສິດທິພົນລະເມືອງມີລັດພາຄີເກືອບທົ່ວໂລກ. ປະຈຸບັນ 160 ປະເທດໄດ້ເປັນພາຄີສົນທິສັນຍາດັ່ງກ່າວ, ໃນນັ້ນລວມມີບັນດາປະເທດເພື່ອນບ້ານ ແລະ ເພື່ອນມິດຂອງ ສປປລາວ ໃນພາກ ພື້ນເຊັ່ນ: ກຳປູເຈຍ, ຫວຽດນາມ, ອິນໂດເນເຊຍ ແລະ ໄທ. ປະສົບປະການ ແລະ ບົດຮຽນຂອງ ບັນດາປະເທດເຫລົ່ານີ້ອາດເປັນພື້ນຖານເປັນຢ່າງດີສຳລັບ ສປປລາວ ທີ່ຈະພິຈາລະນາໃຫ້ສັດຕະຍາບັນສົນທິສັນຍາດັ່ງກ່າວຮ່ວມກັບ 160 ລັດພາຄີອື່ນ. ການລະນຶກວັນຄົບຮອບ 60 ປີ ຂອງ ຖະແຫລງການສາກົນວ່າດ້ວຍສິດທິມະນຸດນີ້ ເປັນສ່ວນຫນຶ່ງຂອງການຈັດຕັ້ງການລະນຶກໃນຂອບເຂດທົ່ວໂລກ ເຊິ່ງຊ່ວຍເນັ້ນຫນັກເຖິງຄວາມຈຳເປັນເພື່ອຮ່ວມກັບວົງຄະ

ນາຍາດສາກົນໃນການໃຫ້ສັດຕະຍາບັນແກ່ສົນທິສັນຍາສາກົນ ວ່າດ້ວຍສິດທິທາງດ້ານການເມືອງ ແລະ ສິດທິພົນລະເມືອງ.

ອົງການສະຫະປະຊາຊາດເພື່ອການພັດທະນາ ມີຄວາມຮັບຮູ້ກ່ຽວກັບຄວາມຫຍຸ້ງຍາກຂອງ ສປປ ລາວ ຊຶ່ງພົວພັນກັບຂີດຄວາມສາມາດ ແລະ ຊັບພະຍາກອນເພື່ອປະຕິບັດພັນທະໃນການລາຍງານພາຍໃຕ້ສົນທິສັນຍາສາກົນດ້ານສິດທິມະນຸດ. ຕໍ່ບັນຫາດັ່ງກ່າວນີ້, ຂ້າພະເຈົ້າມີຄວາມປີຕິຍິນດີແຈ້ງໃຫ້ຊາບວ່າ ໃນຖານະເປັນຄູ່ຮ່ວມງານຂອງ ສປປລາວ ທີ່ໃຫ້ຄຳໝັ້ນສັນຍາໃນຄວາມພະຍາຍາມຂອງ ສປປລາວ ເພື່ອເພີ່ມທະວີ ການເຂົ້າຮ່ວມຂອງປະເທດໃນຂະບວນການກົດໝາຍສາກົນ, ອົງການສະຫະປະຊາຊາດເພື່ອການພັດທະນາພ້ອມແລ້ວ ແລະ ມີຄວາມເຕັມໃຈທີ່ຈະໃຫ້ການຊ່ວຍເຫລືອແກ່ ສປປ ລາວ ໃນການໃຫ້ສັດຕະຍາບັນແກ່ສົນທິສັນຍາສາກົນໂດຍສະເພາະຢ່າງຍິ່ງໃນຂົງເຂດສິດທິມະນຸດ.

ດັ່ງທີ່ບັນດາທ່ານໄດ້ຊາບແລ້ວນັ້ນ, ນັບແຕ່ປີ 2002, ອົງການສະຫະປະຊາຊາດເພື່ອການພັດທະນາໄດ້ໃຫ້ການຊ່ວຍເຫລືອແກ່ໂຄງການກົດໝາຍສາກົນຜ່ານກະຊວງການຕ່າງປະເທດ. ອົງການສະຫະປະຊາຊາດເພື່ອການພັດທະນາ ໂດຍ ຮ່ວມກັບແຟັງລັງ ແລະ ສະຫະພາບເອີຣົບ ຈະປະກອບສ່ວນໃຫ້ການຊ່ວຍເຫລືອແກ່ໂຄງການກົດໝາຍສາກົນ ເພື່ອເພີ່ມທະວີຂີດຄວາມສາມາດຂອງ ສປລາວ ໃນການເຂົ້າຮ່ວມໃນກົດໝາຍສາກົນ. ຂ້າພະເຈົ້າມີຄວາມຍິນດີທີ່ສຸດແຈ້ງໃຫ້ບັນດາທ່ານຊາບວ່າ ໂຄງການກົດໝາຍສາກົນໄລຍະ III ເຊິ່ງຈະເລີ່ມຕົ້ນໃນປີ 2009 ນີ້ຈະມີທຶນຫລາຍສົມຄວນສຳລັບການພັດທະນາຂີດຄວາມສາມາດຂອງປະເທດສຳລັບການລາຍງານ ກ່ຽວກັບການປະຕິບັດ ແລະ ພັນທະທີ່ກ່ຽວຂ້ອງອື່ນໆພາຍໃຕ້ສົນທິສັນຍາດ້ານສິດທິມະນຸດ.

ທ້າຍສຸດນີ້, ໃນໂອກາດວັນລະນຶກທີ່ສຳຄັນນີ້, ພວກເຮົາມາພ້ອມກັນສະເຫລີມສະຫລອງຜົນສຳເລັດຂອງ ສປປລາວ ໃນການປະຕິບັດຄຳໝັ້ນສັນຍາຂອງຕົນໂດຍສອດຄ່ອງກັບຖະແຫລງ ການສາກົນວ່າດ້ວຍສິດທິມະນຸດ. ແຕ່ວ່າໃນຂະນະດຽວກັນ, ພວກເຮົາພ້ອມກັນສືບຕໍ່ຜົນສຳເລັດ ຂອງສປປ ລາວ ແລະ ຮຽນຮູ້ຫລາຍກວ່າເກົ່າກ່ຽວກັບສິ່ງທ້າທາຍທີ່ພວກເຮົາພົບພໍ້. ຖ້າວ່າພວກເຮົາເຮັດແນວນັ້ນ, ພວກເຮົາຈະສາມາດຮັບປະກັນວ່າ ເມື່ອພວກເຮົາມາພົບພໍ້ກັນໃນທົດສະຫວັດໜ້າ ຂອງຖະແຫລງການສາກົນວ່າດ້ວຍສິດທິມະນຸດ, ພວກເຮົາຈະມີຜົນສຳເລັດຫລາຍກວ່າເກົ່າທີ່ຈະມາພ້ອມກັນສະຫລອງໃນການນຳເອົາກຽດ ແລະ ສັກສີມາສູ່ພວກເຮົາທຸກຄົນ.

**ຂໍຂອບໃຈ**

